**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຂາເຂົ້າ ເລກທີ 1022
ວັນທີ 25/5/22

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 728 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 25. 5. 2022

# ແຈ້ງການ

ຮຽນ: - ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື. ✓
- ທ່ານ ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

**ເລື່ອງ:** ທິດຊີ້ນຳກ່ຽວກັບ ການສົ່ງອອກຖ່ານດຳ ໄປຕ່າງປະເທດ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ການຕົກລົງ ແລະ ທິດຊີ້ນຳ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 06 ພຶດສະພາ 2022.
- ອີງຕາມ ການຕົກລົງຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 23 ພຶດສະພາ 2022.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ທິດຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້:

**1.** ໃຫ້ສືບຕໍ່ຍຶດໝັ້ນຕາມຍຸດທະສາດ ແລະ ນະໂຍບາຍຂອງລັດຖະບານ ວາງອອກຢ່າງເຂັ້ມງວດ ຄື: ບໍ່ອະນຸຍາດໃຫ້ສົ່ງອອກຖ່ານດຳ ໄປຕ່າງປະເທດ ຢ່າງເດັດຂາດ.

**2.** ສຳລັບຖ່ານດຳທີ່ໄດ້ຜະລິດແລ້ວ ແລະ ຕົກຄ້າງໃນປັດຈຸບັນ ແມ່ນເຫັນດີໃຫ້ສົ່ງອອກເປັນເທື່ອສຸດທ້າຍຜ່ານດ່ານສາກົນເທົ່ານັ້ນ ໂດຍກຳນົດເວລາການສົ່ງອອກແມ່ນບໍ່ໃຫ້ກາຍວັນທີ **31** ກໍລະກົດ **2022** ແລະ ຜູ້ປະກອບການຕ້ອງປະຕິບັດພັນທະໃຫ້ລັດ ໃນມູນຄ່າ **1.200.000** ກີບ ຕໍ່ໂຕນ (ລວມທັງຖ່ານດຳທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງ) ແລະປະຕິບັດຄ່າທຳນຽມອື່ນໆ ໃຫ້ຄົບຖ້ວນກ່ອນ ຈຶ່ງອະນຸຍາດໃຫ້ສົ່ງອອກ. ຖ້າຮອດກຳນົດເວລາດັ່ງກ່າວ ຜູ້ປະກອບການໃດຍັງສົ່ງອອກບໍ່ໝົດ ແມ່ນໃຫ້ຢຸດຕິການສົ່ງອອກເດັດຂາດ ແລະ ຈຳນວນຖ່ານດຳທີ່ເຫຼືອ ແມ່ນໃຫ້ຈຳໜ່າຍນຳໃຊ້ພາຍໃນ.

**3.** ມອບໃຫ້ກະຊວງການເງິນ ຊີ້ນຳເຈົ້າໜ້າທີ່ພາສີ ແຕ່ລະດ່ານສາກົນ ເປັນເຈົ້າການຕິດຕາມກວດກາ ແລະ ຄຸ້ມຄອງການສົ່ງອອກຖ່ານດຳດັ່ງກ່າວ ໃຫ້ຖືກຕ້ອງຕາມຂັ້ນຕອນກົດໝາຍ ແລະ ເງື່ອນໄຂກ່ຽວຂ້ອງກຳນົດ, ເດັດຂາດບໍ່ໃຫ້ມີຊ່ອງຫວ່າງສວຍໂອກາດ. ກໍລະນີ ມີການລັກລອບຂົນສົ່ງຖ່ານດຳ ອອກໄປຕ່າງປະເທດ ຢູ່ດ່ານຊາຍແດນໃດ ແມ່ນໃຫ້ຄະນະຮັບຜິດຊອບດ່ານ, ເຈົ້າໜ້າທີ່ດ່ານ ແລະ ຜູ້ປະກອບການກ່ຽວຂ້ອງ ຮັບຜິດຊອບຕໍ່ກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດ ຢ່າງເຂັ້ມງວດ.

**4.** ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນໃຈກາງສົມທົບກະຊວງອຸດສາຫະກຳ ແລະ ການຄ້າ ແລະພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ກວດກາ ແລະ ຢັ້ງຢືນຈຳນວນຖ່ານດຳທີ່ໄດ້ຜະລິດແລ້ວ ແລະ ຕົກຄ້າງ

ດັ່ງກ່າວ ຂອງຜູ້ປະກອບການຕ່າງໆນັ້ນ ເພື່ອເປັນຂໍ້ມູນໃຫ້ຂະແໜງການກ່ຽວຂ້ອງ ດຳເນີນການອະນຸຍາດສົ່ງອອກຕາມກົດໝາຍ ແລະ ທັນກຳນົດເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການ

**ອາລຸນໄຊ ສູນນະລາດ**

ບ່ອນນຳສົ່ງ:

1. ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
2. ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ 01 ສະບັບ
3. ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງໃນທົ່ວປະເທດ 01 ສະບັບ
4. ຄະນະ ຫສນຍ, ທ່ານລະ 01 ສະບັບ
5. ກົມເລຂາ, ຫສນຍ 01 ສະບັບ
6. ສຳເນົາ 01 ສະບັບ